ຂ່າວ NEWS
BOL–LPB
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ
Tel: 071 260700 Fax: 071 260718
Website: https://www.bol.gov.la/luangprabang

# ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ລົງເຄື່ອນໄຫວວຽກງານຢູ່ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ



ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ໄດ້ມາເຄື່ອນໄຫວວຽກງານຢູ່ແຂວງຫຼວງພະບາງ ແລະ ໄດ້ລົງຢ້ຽມຢາມ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ (ທຫລ.ຫຼບ) ໃນຕອນເຊົ້າຂອງວັນທີ່ 10 ພະຈິກ 2022 ທີ່ຫ້ອງປະຊຸມເອກະພາບ (ຊັ້ນ III) ທຫລ.ຫຼບ ໂດຍມີຄະນະກົມຈາກ ທຫລ ສໍານັກງານໃຫຍ່, ຄະນະສາຂາ ທຫລ.ຫຼບ, ຄະນະພະແນກ ພ້ອມດ້ວຍພະນັກງານທັງໝົດເຂົ້າຮ່ວມ.

ໃນໂອກາດດັ່ງກ່າວ ທ່ານຍັງໄດ້ຮັບຟັງການລາຍງານໂດຍຫຍໍ້ ກ່ຽວກັບກັບການຈັດຕັ້ງປະຕິບັດ ແລະ ການ ເຄື່ອນໄຫວວຽກການຂອງ ທຫລ.ຫຼບ ປະຈຳ 09 ເດືອນ ແລະ ທິດທາງແຜນການ 03 ເດືອນທ້າຍປີ 2022 ລາຍງານໂດຍ ທ່ານ ສັງທອງ ຄູນຄຳ ຮອງຫົວໜ້າ ທຫລ.ຫຼບ. ໃນໂອກາດດັ່ງກ່າວ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຕີລາຄາສູງຕໍ່ກັບການຊີ້ນຳ-ນຳພາ ຂອງທ່ານຫົວໜ້າ ສາຂາ ທຫລ.ຫຼບ ພ້ອມດ້ວຍຄະນະ ເຮັດໃຫ້ ທຫລ.ຫຼບ ມີອັນປ່ຽນແປງໃໝ່ຢ່າງຕັ້ງໜ້າ ແລະ ຍັງໄດ້ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດ ໃຫ້ຈົ່ງເອົາໃຈໃສ່ເສີມຂະຫຍາຍຜົນງານທີ່ພົ້ນໄດ້ໃນໄລຍະຜ່ານມາ, ນຳເອົາມະຕິຂອງຂັ້ນເທິງໄປຈັດຕັ້ງຜັນຂະຫຍາຍເປັນແຜນການ, ແຜນງານອັນລະອຽດ, ມີຄວາມສາມັກຄີເປັນເອກະພາບ ເຮັດວຽກລວມສູນປະຊາທິປະໄຕ, ສືບຕໍ່ປັບປຸງປ່ຽນແປງ ແລະ ແກ້ໄຂຂໍ້ຄົງຄ້າງຜ່ານມາ, ສືບຕໍ່ນຳພາທະນາຄານທຸລະກິດທີ່ຢູ່ທ້ອງຖິ່ນທີ່ຮັບຜິດຊອບໃຫ້ສາມາດປະຕິບັດໄປຕາມແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ສາມາດບັນລຸຕາມແຜນການຂອງການຈັດຕັ້ງປະຕິບັດວາລະແຫ່ງຊາດທີ່ໄດ້ກຳນົດໄວ້.






**ຂ່າວ: ບົວວອນ ວົງສະຫວ່າງ**

**ພາບ: ສຸດທິສັກ ຫວັງສະຫວັດ**

ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ